M13/1/AXLAO/HP1/LAO/TZ0/XX

22130581

International Baccalaureate®
Baccalauréat International
Bachillerato Internacional

**LAO A: LITERATURE – HIGHER LEVEL – PAPER 1**
**LAO A : LITTÉRATURE – NIVEAU SUPÉRIEUR – ÉPREUVE 1**
**LAOSIANO A: LITERATURA – NIVEL SUPERIOR – PRUEBA 1**

Wednesday 8 May 2013 (morning)
Mercredi 8 mai 2013 (matin)
Miércoles 8 de mayo de 2013 (mañana)

2 hours / 2 heures / 2 horas

INSTRUCTIONS TO CANDIDATES

- Do not open this examination paper until instructed to do so.
- Write a literary commentary on one passage only.
- The maximum mark for this examination paper is *[20 marks]*.

INSTRUCTIONS DESTINÉES AUX CANDIDATS

- N’ouvrez pas cette épreuve avant d’y être autorisé(e).
- Rédigez un commentaire littéraire sur un seul des passages.
- Le nombre maximum de points pour cette épreuve d’examen est *[20 points]*.

INSTRUCCIONES PARA LOS ALUMNOS

- No abra esta prueba hasta que se lo autoricen.
- Escriba un comentario literario sobre un solo pasaje.
- La puntuación máxima para esta prueba de examen es *[20 puntos]*.


© International Baccalaureate Organization 2013

https://xtremepape.rs/

*ໃຫ້ເຈົ້າວິຈານໃນແງ່ວັນນະຄະດີຫ**ນຶ່ງເລື່ອງ**ທີ່ເຈົ້າເລືອກຈາກສອງເລື່ອງຕໍ່ໄປນີ້*

**1.**

"ອ້າຍມາແຕ່ພາກສ່ວນໃດ ມີວຽກຫຍັງນໍ" ສາວຂາເຂົ້າຂາອອກຖາມ ຂ້ອຍ … ຂ້ອຍເປັນຜົວນາງແຕງອ່ອນ, ແຕງອ່ອນພະນັກງານພິມດີດຢູ່ນີ້ ດຽວນີ້ນອນໂຮງໝໍ ອອກລູກນອກພົກ" ອ້າຍພົ້ວທັງເວົ້າທັງຫາຍໃຈຫອບ "ອອກລູກນອກພົກເອື້ອຍແຕງອ່ອນນະ? ອາການລາວເປັນຈັ່ງໃດແລ້ວອ້າຍ" ພະນັກງານສາວເຫັດຄືວສົນເຂົ້າຊົນກັນ ໃບໜ້າຂອງນາງສະແດງອາການກັງວົນໃຈສຸດຂີດ "ອາການໜັກໜວງຫລາຍ ທ່ານໝໍວ່າຕ້ອງຜ່າຕັດແຕ່ຂາດເລືອດ ສະນັ້ນຂ້ອຍຈຶ່ງມາແຈ້ງ ທາງຫ້ອງການຊາບເພື່ອຂໍຄວາມເຫັນໃຈໃຫ້ຄວາມຊ່ວຍເຫລືອ ພວກຂ້ອຍເອງໝົດບັນຍາແລ້ວ"… "ໄດ້ລະອ້າຍ ບໍ່ຕ້ອງເປັນຫ່ວງດອກ ນ້ອງຊິສະໜີເລື່ອງນີ້ໃຫ້ທາງຫ້ອງການຊາບດຽວນີ້ລະ ຂໍໃຫ້ອ້າຍອຸ່ນອ່ຽນ ເອື້ອຍແຕງອ່ອນແມ່ນພະນັກງານຕົວເດັ່ນຂອງສຳນັກ" ສາວຂາເຂົ້າຂາອອກ ເວົ້າຢ່າງໜັກແໜ້ນ …

ຕໍ່ມາເລື່ອງເລົ່າຂອງແຕ່ງອ່ອນກໍກາຍເປັນບັນຫາຖົກຖຽງກັນໃນກອງປະຊຸມຂອງຄະນະຫ້ອງ ການ

"ເລື່ອງນີ້ຕ້ອງຮີບຮ້ອນແກ້ໄຂ ຄວນມີນະໂຍບາຍອັນເໝາະສົມ" …

"ເລື່ອງນະໂຍບາຍດ້ານການເງິນນັ້ນເຮົາວ່າຢ່າສະ ເພາະພວກເຮົາມີງົບຈຳກັດແພງ ໄວ້ໃຊ້ສະເພາະວຽກທີ່ຈຳເປັນທີ່ສຸດ ເຮົາວ່າຄວນປຸກລະດົມບໍລິຈາກເລືອດຈະດີກວ່າ ພະນັກງານ ສຳນັກເຮົາມີເກືອບຮອດຮ້ອຍຄົນ" …

"ເຮົາຄິດວ່າເລື່ອງນີ້ຄວນເປັນຄວາມຮັບຜິດຊອບໂດຍກົງຂອງໜ່ວຍແມ່ຍິງຮາກຖານປະຈຳ ສຳນັກງານຂອງເຮົາເພາະວ່ານາງແຕງອ່ອນເປັນສະມາຊິກຂອງເພັດຍິງຜູ້ຫນຶ່ງ ພວກເຮົາຫ້ອງ ການບໍ່ຄວນແກວ່ງຄ້ອນກາຍໝາກມ່ວງ ດີບໍ່ດີຈະຖືກທາງໜ່ວຍຮາກຖານແມ່ຍິງ ເວົ້າວ່າລ່ວງ ເກີນວຽກແມ່ຍິງ" …

ຈາກນັ້ນສະຫາຍຫົວໜ້າຫ້ອງການກໍແຕ່ງໃຫ້ລຸງກຳພະນັກງານອະນາໄມໄປແຈ້ງຂ່າວເລື່ອງ ນາງແຕງອ່ອນໃຫ້ໜ່ວຍແມ່ຍິງຊາບພ້ອມດ້ວຍຈົດໝາຍນ້ອຍ ບໍ່ພໍລາວໃນຫ້ອງຖັດໄປຄະນະໜ່ວຍ ຮາກຖານແມ່ຍິງກໍເລີ່ມປຶກສາຫາລືກັນຢ່າງຂຸ້ນຂ້ຽວ …

"ແມ່ນຢູ່ທີ່ວ່ານາງແຕງອ່ອນເປັນສະມາຊິກແມ່ຍິງແຕ່ພວກເຮົາບໍ່ຄວນລືມວ່າລາວເປັນຮອດ ຄະນະໜ່ວຍຊາວໜຸ່ມພະຈຳສຳນັກເຮົາ ຊາວໜຸ່ມມີເງິນຄັງຫລາຍກວ່າແມ່ຍິງ … ເຮົາວ່າເລື່ອງນີ້ ຄວນມອບໃຫ້ໜ່ວຍຊາວໜຸ່ມພຸ້ນບໍເປັນຜູ້ແກ້" ສະຫາຍນາງດວງເວົ້າເກືອບບໍ່ສຸດຄວາມສຽງເຫັນດີ ກໍຟົດຂຶ້ນພ້ອມບາດວ່າ "ເຫັນດີ ເຫັນດີ" …

ຕາເວັນແດງຄ່ອຍໆເຊື່ອນລົງບັງປາຍພ້າວແຄມຂອງ … ເລື່ອງນາງແຕງອ່ອນຕ້ອງ ໄດ້ ເລື່ອນໄປປຶກສາກັນຢູ່ໜ່ວຍຊາວໜຸ່ມໃນມື້ຕໍ່ໄປ

ທາງເບື້ອງລຸງກຳຫລັງຈາກສົ່ງຈົດໝາຍນ້ອຍແລະແຈ້ງກ່ຽວກັບອາການຂອງນາງແຕງອ່ອນໃຫ້ໜ່ວຍແມ່ຍິງຊາບລຸງກໍຈ້າວລົດຖີບໄປໂຮງໝໍເພື່ອໄປເບິ່ງອາການຂອງແຕງອ່ອນ ທ່ານໝໍບອກວ່າຊີວິດຂອງແຕງອ່ອນພວມແຂວນຢູ່ເສັ້ນດ້າຍແລບໆ ຈຳເປັນຕ້ອງໄປຜ່າຕັດ ເອົາລູກນອກພົກອອກແຕ່ກໍຈົນຕາແຈ ທາງໂຮງໝໍຂາດເລືອດ … ຍິນແນວນັ້ນຫົວໃຈຂອງລຸງກຳ ກໍປະກົດວ່າມັນຫລົ່ນລົງມາ ຢູ່ປາຍຕີນ ຍິ່ງແນມເຫັນໃບໜ້າອັນຂາວຈືດຂອງນາງແຕງອ່ອນ ແລະໜ້ານ້ານໆແບບສິ້ນຫວັງຂອງອ້າຍພົ້ວຜູ້ເປັນຜົວນາງແລ້ວລຸງກຳກໍແຮງກະວົນກະວາຍໃຈ ລຸງເຕັ້ນຂຶ້ນລົດຖີບເບັດໜ້າເມືອເຮືອນຢູ່ຄຸ້ມໂພນທັນ ອີກປະມານສີ່ສິບນາທີຕໍ່ມາສາມລໍ້ຈຳໂປ ຄັນຫນຶ່ງກໍມາຈອດຢູ່ປາກປະຕູໂຮງໝໍ ລຸງກຳພ້ອມດ້ວຍເມຍ ລູກຊາຍລູກສາວອີກສອງຄົນ … ພາຍໃນ (ໂຮງໝໍ) ບໍ່ຮອດຊາວນາທີການບໍລິຈາກເລືອດກໍສຳເລັດລົງ (ທ່ານໝໍເວົ້າກັບລຸງກຳວ່າ): ທາງໂຮງໝໍຂໍອອກບັດຢັ້ງຢືນໃຫ້ພວກລຸງເກັບໄວ້



https://xtremepape.rs/

ເທື່ອໜ້າເທື່ອໃນເມື່ອເຖິງຄາວຈຳເປັນພວກລຸງກໍຈະໄດ້ຮັບການບໍລິຈາກເລືອດໂດຍບໍ່ໄດ້ເສຍຄ່າ” ລຸງກ່ຳໄດ້ຍິນແນວນັ້ນເລີຍກ່າວຕອບແບບສຸພາບວາ: “ລຸງວ່າຢ່າລະເລື່ອງນັ້ນ ລຸງເຊື່ອໃນບາບບຸນ ຄຸນໂທດ ເຮັດບຸນບຸນຕ້ອງສະໜອງຕອບ ພວກລຸງມາບໍລຈາກມື້ນີ້ແມ່ນຍ້ອນຄວາມເມດຕາສົງສານ ຊີວິຕມະນຸດດ້ວຍກັນ ບໍ່ໄດ້ມາໃນການຈັດຕັ້ງ ພວກລຸງເຊື່ອວ່າການເຮັດບຸນນັ້ນຍ່ອມສູງກວ່າສິ່ງຕອບ ແທນໃດໆທັງສິ້ນ” …

ລຸງແຕ່ງໃຫ້ເມຍຢູ່ກັບອ້າຍພົ້ວເພື່ອເບິ່ງອາການຂອງແຕງອ່ອນ ໃນເຊົ້າມື້ໃໝ່ລຸງກ່ຳຖີບລົດໄປເຮັດໜ້າທີ່ຂອງຕົນຕາມປົກຄະຕິ … ລຸງມົວເມົາໃນການປັດກວາດແລະຮົດນ້ຳດອກໄມ້ຈົນເກືອບລືມ ໂມງຊົ່ວວ່າສະເດືອກຮູ້ກໍເປັນເວລາສິບເອັດໂມງເຄິ່ງແລ້ວ … ສຽງທີ່ລຸງໄດ້ຍິນພໍໜັດແໜວນັ້ນປະກອບດ້ວຍ … ສ້າງຜົນງານ … ຄຳນັບຮັບຕ້ອນ … ປຸກລະດົມຊຸກຍູ້ການບໍລິຈາກແລະອື່ນໆ ລູງວ່ຽງ ຫູຟັງ … “ຕອນບ່າຍມື້ນີ້ເຮົາຊິສະເໜີໃຫ້ທຸກໆພາກສ່ວນມາປະຊຸມປຶກສາຫາລືກັນ ເລື້ອງເປັນຕາຍແນວນີ້ຕ້ອງໄດ້ຊ່ວຍແກ້ໄຂຢ່າງຮີບດ່ວນ” …

ວິເສດສະແຫວງສຶກສາ *ຄົນຢ່າງລຸງກ່ຳ ໃນລຳເຊສະອື້ນ* (1995)



https://xtremepape.rs/

**2.**

ຫລາຍສຳໄມ້ ໃນປ່າອະນັນໝັກ
ຫາລຳເປັນ ຂອງຫອມແກ່ນຈັນບໍ່ມີໄດ້
ຄົນເຕັມບ້ານ ຄາເມມີມາກ
ຫາຜູ້ຕ້ອງ ມະໂນໄທ້ບໍ່ມີ …
ຮຽມກ່າວຫລົ້ນ ພໍສວ່າງມະໂນເຫງົາ
ມິໃຊ່ສວຍສີໃຜ ສະໝ່ອຍພໍພຽງນ້ອຍ
ເຈົ້າຜູ້ປັນຍາສ້ຽມ ແຫລມຄົມຄົງສ່ອງເຫັນຕື່
ຮຽມຫາກໄຂແຕ່ຊັ້ນນອກໄວ້ …
ຄັນບໍ່ມີເຜືອຍໄມ້ໄຟບໍ່ລາມໄໝ້ປ່າ ນາງເອີຍ
ມືບໍ່ໃສ່ຖໍ່ຈ້ຳ ເຮືອຊິຊື້ນເຜັ່ນຜາຍ ພີ່ລີ
ຊາດທີ່ຄູຫາຫ້ອງ ຣາຊະສີຫຽວທ່ອງ
ບໍ່ຫ່ອນລະຖິ້ມໄວ້ ຊິໄປຊົ້ນປ່າຄາ ພີ່ແລ້ວ …
ຮຽມນີ້ ເປັນດັ່ງແກ້ວຢູ່ນ້ຳ ໃນຖ້ຳສ່ອງບໍ່ເຫັນ
ມັນຫາກຕົກຈາກອ້າງ ນ້ຳເພັດກໍຍັງຕິດ
ພິຫາກເປັນຄຳດີ ຊິກຊາວກໍຍັງໄດ້ …
ແກ້ວຫາກຍັງຕ່າງແກ້ວ ລືຄ່າແສນຄຳ
ບໍ່ໃຊ່ແນວຊາຍຜົງ ແຮ່ຊະຄອມແຄມນ້ຳ
ຫາກບໍ່ໂສດາດ້ວຍ ທັມມະໂຮງກໍຕາມໂຂກ ເສຍຖ້ອນ
ຫີນແຮ່ ເຈົ້າຫາກກຸມວ່າແກ້ວ ຕາມເຈົ້າຊິເບິ່ງເອົາຖ້ອນ …
ໄຜບໍ່ຈຳໃຈເຈົ້າ ກິນສານຂອງເບື່ອ ເມົານາ
ເຈົ້າຫາກເປັນຜູ້ຮູ້ ສັງມາໃຫ້ເພິ່ນເຕືອນ
ຍອດບຸ່ນເຈົ້າພັດວ່າ ຫວານກວ່າອ້ອຍ ເມື່ອໜ້າຫາກຊິເຫັນດອກນາ
ອ້ອຍຫວານພອຍວ່າສົ້ມ ໃຫ້ລອງຊິມພໍຮູ້ຂ່າວ …
ເມື່ອຊິໄຂລະຫັດໃຫ້ ດອມຜົມ ພົ້ນສ່ວນໄປນັ້ນ
ຄັນວ່າໄຂຕໍ່ແຂ້ວ ມັນຊິຮູ້ຢາກກິນ
ເມື່ອຊິໄຂຕໍ່ຫູສອງກ້ຳ ກໍລົມຜ່ານພັດອອກໄປນັ້ນ
ເມື່ອຊິເວົ້າຕໍ່ໜ້າ ຕາຊ້າຍກໍເຫລືອບແລ
ເມື່ອຈັກໄຂລະຫັດໃຫ້ ດອມແຂນຊິຖິ້ມຖ່ວງໄປແລ້ວ
ມັນຈັກລະຖິ້ມໄວ້ ເໜືອໃຕ້ທ່າເທິງບໍ່ຮູ້
ເມື່ອຈັກໄຂຕໍ່ດັ່ງສອງກ້ຳ ກໍກົວຈາມຝັງເຝືອນໄປແລ້ວ
ເມື່ອຈັກໄຂຕໍ່ເສື້ອ ກໍຊັງເມັນທັງເຮືອດ

ບໍ່ມີຊື່ຜູ້ແຕ່ງ *ລຶປພະສູນ* (ຫນັງສືໃບລານບໍ່ຮູ້ປີແຕ່ງ)



https://xtremepape.rs/